## ມິຊຊາອາທິດທີ 31 ກຳນົດທຳມະດາ
## ວັນທີ 30 ຕຸລາ 2022



**ພຣະວໍລະສານໂດຍນັກບຸນລູກາ 19, 1-10**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດເຂົ້າເມືອງເຢຣິໂກ. ພໍດີມີຄົນຜູ້ໜຶ່ງຊື່ຊາເກວ ເປັນຫົວໜ້າພວກເກັບສ່ວຍ, ເປັນຄົນຮັ່ງມີຫລາຍ. ຊາເກວຢາກເຫັນພຣະເຢຊູເຈົ້າວ່າເປັນຄົນແນວໃດ ແຕ່ບໍ່ສົມຫວັງຍ້ອນຄົນຫລາຍແລະເຂົາເອງກໍເປັນຄົນເຕ້ຍ. ເຂົາຈຶ່ງແລ່ນໄປຂຶ້ນເທິງກົກເດື່ອຄອຍເບິ່ງຍ້ອນພຣະອົງຈະສະເດັດມາທາງນັ້ນ.

ເມື່ອພຣະເຢຊູເຈົ້າສະເດັດມາເຖິງທີ່ນັ້ນ, ພຣະອົງຊົງເງີຍພຣະພັກທອດພຣະເນດເຫັນຊາເກວຈຶ່ງກ່າວວ່າ: ຊາເກວ, ລົງມາໄວໆ, ມື້ນີ້ເອງ, ເຮົາຈະຕ້ອງໄປພັກເຊົາເຮືອນເຈົ້າ. ຊາເກວກໍຮີບລົງມາຈາກກົກໄມ້ແລະຕ້ອນຮັບພຣະອົງດ້ວຍຄວາມຊື່ນຊົມຍິນດີ.

ເມື່ອເຫັນດັ່ງນັ້ນ, ຄົນທັງຫລາຍກໍຈົ່ມວ່າ: ທ່ານຜູ້ນີ້ໄປພັກເຊົາຢູ່ກັບຄົນບາບ. ສ່ວນຊາເກວກໍລຸກຂຶ້ນທູນພຣະອົງເຈົ້າວ່າ: ບັດນີ້ຂ້າພະເຈົ້າຂໍຍົກຊັບສົມບັດຂອງຂ້າພະເຈົ້າເຄິ່ງໜຶ່ງໃຫ້ທານແກ່ຄົນທຸກຈົນ. ແລະຖ້າຂ້າພະເຈົ້າໄດ້ລັກໂລບເອົາຂອງຜູ້ໃດ, ຂ້າພະເຈົ້າຂໍໃຊ້ແທນສີ່ເທົ່າ.

ພຣະເຢຊູເຈົ້າກ່າວວ່າ: ວັນນີ້ຄວາມຣອດໄດ້ເຂົ້າມາສູ່ເຮືອນຫລັງນີ້ແລ້ວ, ດ້ວຍວ່າຜູ້ນີ້ກໍເປັນລູກຂອງອາບຣາຮາມດ້ວຍ. ດ້ວຍວ່າ, ບຸດມະນຸດສະເດັດມາຊອກຫາແລະຊ່ວຍຜູ້ທີ່ເສຍໄປແລ້ວໃຫ້ຣອດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນອາທິດກ່ອນ, ວາຈາພຣະເຈົ້າໄດ້ກ່າວເຖິງຄົນເກັບສ່ວຍທີ່ສຳນຶກຜິດເຖິງການກະທຳຂອງຕົນ ແລະຂໍໂທດນຳພຣະເຈົ້າໃນຄຳພາວະນາ. ແລະເຂົາກໍໄດ້ຄືນດີກັບພຣະເຈົ້າ.

ສ່ວນວັນນີ້ອາທິດ, ວາຈາພຣະເຈົ້າກໍກ່າວເຖິງຄົນເກັບສ່ວຍອີກຄົນໜຶ່ງທີ່ມີຊື່ວ່າ: ຊາເກວ. ຄົນເກັບສ່ວຍຜູ້ນີ້ມີຄວາມປາດຖະໜາຢາກພົບເຫັນພຣະເຢຊູເຈົ້າ. ແຕ່ຍ້ອນເຂົາເປັນຄົນເຕ້ຍແລະຄົນບາບ. ດ້ວຍເຫດນີ້, ຊາເກວຈຶ່ງຊອກຫາທຸກວິທີທາງເພື່ອພົບພຣະເຢຊູເຈົ້າ. ຈົນເຂົາໄດ້ປີນຂຶ້ນກົກໝາກເດື່ອເພື່ອຈະເຫັນພຣະເຢຊູເຈົ້າທີ່ຈະຜ່ານມາທາງນັ້ນ. ແຕ່ກ່ອນທີ່ຊາເກວຈະເຫັນພຣະເຢຊູເຈົ້າ, ພຣະອົງໄດ້ເຫັນເຂົາກ່ອນ. ພຣະອົງຢາກໄປພັກເຊົາຢູ່ເຮືອນເຂົາ. ຊາເກວບໍ່ພຽງແຕ່ຕ້ອນຮັບພຣະເຢຊູເຈົ້າເຂົ້າໃນເຮືອນຂອງເຂົາດ້ວຍຄວາມຍິນດີເທົ່ານັ້ນ, ແຕ່ເຂົາຍັງຕ້ອນຮັບພຣະເຢຊູເຈົ້າເຂົ້າໃນໃຈຂອງເຂົາອີກດ້ວຍ. ເພາະເຂົາໄດ້ຜັນປ່ຽນຊີວິດການກະທຳຂອງຕົນ. ແຕ່ກ່ອນເຂົາໄດ້ສໍ້ໂກງເງິນຄຳຊັບສິນຂອງຄົນທຸກຈົນ, ດຽວນີ້ເຂົາຍົກຊັບສິນເຄິ່ງໜຶ່ງຂອງເຂົາໃຫ້ກັບຄົນເຫລົ່ານັ້ນ. ແຕ່ກ່ອນເຂົາໄດ້ລັກໂລບບໍ່ຍຸດຕິທຳຕໍ່ຄົນອື່ນ, ດຽວນີ້ເຂົາຂໍໃຊ້ແທນຄືນສີ່ເທົ່າ. ການກະທຳເຫລົ່ານີ້ສະແດງອອກເຖິງການກັບຈິດປ່ຽນໃຈຂອງຊາເກວ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວກັບເຂົາວ່າ: "ວັນນີ້ຄວາມຮອດໄດ້ເຂົ້າມາສູ່ເຮືອນຫລັງນີ້ແລ້ວ. ດ້ວຍວ່າຜູ້ນີ້ກໍແມ່ນລູກຂອງອາບຣາຮາມຄືກັນ". ໝາຍວ່າຊາເກວກໍມີສ່ວນໃນຄວາມຮອດຂອງພຣະເຈົ້າເຊັ່ນດຽວກັນ.

ແບບຢ່າງຂອງຊາເກວບໍ່ພຽງແຕ່ສະທ້ອນໃຫ້ພວກເຮົາເຫັນເຖິງຄວາມປາດຖະໜາທີ່ຈະຜັນປ່ຽນຊີວິດຂອງຕົນ ເພື່ອຄືນດີກັບພຣະເຈົ້າແລະກັບຄົນອື່ນເທົ່ານັ້ນ, ແຕ່ຍັງສະທ້ອນໃຫ້ພວກເຮົາເຫັນເຖິງຄວາມສຳຄັນຂອງຄວາມຮອດໃນຊີວິດຂອງຊາເກວອີກດ້ວຍ. ເພາະຊາເກວໄດ້ຍອມສະລະຊັບສິນເງິນຄຳຂອງເຂົາເພື່ອແລກເອົາອານາຈັກສະຫວັນ.

ສ່ວນພວກເຮົາເດ, ພວກເຮົາເຫັນໄດ້ເຖິງຄວາມສຳຄັນຂອງອານາຈັກສະຫວັນບໍ, ເຖິງຄວາມຮອດພົ້ນແລະຊີວິດນິລັນດອນບໍ? ພວກເຮົາປາດຖະໜາຢາກພົບພຣະເຢຊູເຈົ້າເພື່ອຄືນດີກັບພຣະອົງບໍ? ຫລືພວກເຮົາເຫັນຄວາມສຳຄັນຂອງຊັບສົມບັດຢູ່ໃນໂລກນີ້ຫລາຍກວ່າອານາຈັກສະຫວັນ?

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດຊ່ວຍລູກໃຫ້ຮູ້ຈັກຜັນປ່ຽນຊີວິດການກະທຳຂອງຕົນ, ເພື່ອຈະໄດ້ຫຍັບເຂົ້າໃກ້ພຣະອົງແລະຮັບຄວາມຮອດຈາກພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ